ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ......003....../ປປທ

ນະຄອນຫຼວງວຽງຈັນ, ວັນທີ....19 ມີນາ 2024....

# ລັດຖະບັນຍັດ

## ວ່າດ້ວຍການປັບປຸງອັດຕາອາກອນມູນຄ່າເພີ່ມ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ (ສະບັບປັບປຸງ) ສະບັບເລກທີ 66/ສພຊ, ລົງວັນທີ 17 ມິຖຸນາ 2019;
- ອີງຕາມ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍກ່ຽວກັບສ່ວຍສາອາກອນ ສະບັບເລກທີ 01/ສພຊ, ລົງວັນທີ 07 ສິງຫາ 2021;
- ອີງຕາມ ມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 20/ຄປຈ, ລົງວັນທີ 07 ມີນາ 2024;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 06/ຄປຈ, ລົງວັນທີ 07 ມີນາ 2024.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະບັນຍັດ:**

**ມາດຕາ 1 ຈຸດປະສົງ**

ລັດຖະບັນຍັດສະບັບນີ້ ກຳນົດກ່ຽວກັບການປັບປຸງອັດຕາອາກອນມູນຄ່າເພີ່ມ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍກ່ຽວກັບສ່ວຍສາອາກອນ ສະບັບເລກທີ 01/ສພຊ, ລົງວັນທີ 07 ສິງຫາ 2021 ມາດຕາ 2 ການປັບປຸງເນື້ອໃນຂອງກົດໝາຍ, ຂໍ້ II ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ, ມາດຕາ 17 ອັດຕາອາກອນມູນຄ່າເພີ່ມ ຂໍ້ 1 ຈາກ ເຈັດສ່ວນຮ້ອຍ (7%) ເປັນ ສິບສ່ວນຮ້ອຍ (10%) ເພື່ອຊ່ວຍໜູນລາຍຮັບງົບປະມານແຫ່ງລັດ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ອັດຕາອາກອນມູນຄ່າເພີ່ມ**

ອາກອນມູນຄ່າເພີ່ມ ໃຫ້ເກັບໃນອັດຕາ ສິບສ່ວນຮ້ອຍ (10%) ສຳລັບ:

- ການນຳເຂົ້າສິນຄ້າ, ການສະໜອງ ສິນຄ້າ ແລະ ການບໍລິການທົ່ວໄປ ທີ່ຖືກເກັບອາກອນມູນຄ່າເພີ່ມຢູ່ພາຍໃນ ສປປ ລາວ;
- ການນຳເຂົ້າແຮ່ທາດ ແລະ ການສະໜອງແຮ່ທາດຢູ່ພາຍໃນປະເທດ;
- ການນຳໃຊ້ພະລັງງານໄຟຟ້າ ສຳລັບຜູ້ຊົມໃຊ້ໄຟຟ້າທົ່ວໄປ, ຜູ້ຜະລິດ, ຜູ້ຈຳໜ່າຍພະລັງງານໄຟຟ້າ.

**ມາດຕາ 3 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດລັດຖະບັນຍັດສະບັບນີ້.

**ມາດຕາ 4 ຜົນສັກສິດ**

ລັດຖະບັນຍັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນ ປະທານປະເທດ ລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

**ທອງລຸນ ສີສຸລິດ**